**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 191 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 1.07.2005

# ດຳລັດ

# ວ່າດ້ວຍການດັດສົມທຸລະກິດນ້ຳປະປາ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ສະບັບ ເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍທຸລະກິດ ສະບັບເລກທີ 03/94/ສພຊ, ລົງວັນທີ 18 ກໍລະກົດ 1994.
- ອີງຕາມ ການສະເໜີ ຂອງ ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 6425 ລົງວັນທີ 1 ມິຖຸນາ 2005.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ I. ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດັດສົມທຸລະກິດນ້ຳປະປາ ເພື່ອສ້າງສະພາບແວດລ້ອມ ທີ່ຊຸກຍູ້ສົ່ງເສີມ ແລະ ເອື້ອອຳນວຍ ໃຫ້ແກ່ຜູ້ດຳເນີນທຸລະກິດນ້ຳປະປາ ໄດ້ເຄື່ອນໄຫວທຸລະກິດຢ່າງມີປະສິດທິຜົນສູງ ແນໃສ່ຮັບປະກັນ ໃຫ້ລູກຄ້າໄດ້ຮັບການບໍລິການ ທີ່ມີຄຸນນະພາບດີ ແລະ ໃນລາຄາທີ່ເໝາະສົມ.

### ມາດຕາ 2: ຂອບເຂດການນຳໃຊ້

ດຳລັດສະບັບນີ້ ມີຜົນບັງຄັບປະຕິບັດຕໍ່ ຜູ້ດຳເນີນທຸລະກິດນ້ຳປະປາ ທັງພາກລັດ ແລະ ເອກກະຊົນ ໃນຂອບເຂດທົ່ວປະເທດ.

### ມາດຕາ 3: ການດັດສົມທຸລະກິດນ້ຳປະປາ

ການດັດສົມທຸລະກິດນ້ຳປະປາ ປະກອບດ້ວຍ: ການດັດສົມທາງດ້ານເຕັກນິກ ແລະ ການດັດສົມທາງດ້ານເສດຖະກິດ ໂດຍແມ່ນອົງການນ້ຳປະປາ ເປັນຜູ້ຮັບຜິດຊອບດຳເນີນການ

ດັດສົມ ພາຍໃຕ້ການຊີ້ນຳຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ( ຊຶ່ງໃນທີ່ນີ້ ເອີ້ນວ່າ **ຄະນະກຳມະການດັດສົມ** ).

## ໝວດທີ II. ການດັດສົມທາງດ້ານເຕັກນິກ

### ມາດຕາ 4: ການຮັບຮອງເອົາພື້ນທີ່ບໍລິການ.

ຜູ້ທີ່ຈະດຳເນີນທຸລະກິດນ້ຳປະປາ ຕ້ອງນຳສົ່ງແຜນຜັງທີ່ບອກລະອຽດ ພື້ນທີ່ບໍລິການຂອງຕົນ ຊຶ່ງໄດ້ຜ່ານການເຫັນດີຈາກ ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ຂອງທ້ອງຖິ່ນທີ່ກ່ຽວຂ້ອງ ໃຫ້ແກ່ອົງການນ້ຳປະປາ ເພື່ອຄົ້ນຄວ້າປະກອບຄຳເຫັນ ແລະ ນຳສະເໜີຄະນະກຳມະການດັດສົມ ເພື່ອພິຈາລະນາໃຫ້ການຮັບຮອງເອົາ. ແຜນຜັງພື້ນທີ່ບໍລິການ ທີ່ຖືກຮັບຮອງເອົາແລ້ວ ຈະເປັນສ່ວນປະກອບຂອງເອກະສານອະນຸຍາດດຳເນີນທຸລະກິດນ້ຳປະປາ. ລະດັບລາຍລະອຽດຕ່າງໆ ຂອງແຜນຜັງພື້ນທີ່ບໍລິການ ແມ່ນໃຫ້ອົງການນ້ຳປະປາ ເປັນຜູ້ກຳນົດ.

ພື້ນທີ່ບໍລິການ ທີ່ໄດ້ຖືກຮັບຮອງເອົາແລ້ວນັ້ນ ຈະຕ້ອງໄດ້ຮັບການປັບປຸງ ເປັນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ລວມທັງ ການຂະຫຍາຍພື້ນທີ່ບໍລິການເກົ່າ ແລະ ພື້ນທີ່ບໍລິການທີ່ໄດ້ຮັບຮອງເພີ້ມເຕີມ.

### ມາດຕາ 5: ການຂໍອະນຸຍາດດຳເນີນທຸລະກິດນ້ຳປະປາ

ຜູ້ທີ່ຈະດຳເນີນທຸລະກິດນ້ຳປະປາ ໃນພື້ນທີ່ບໍລິການໃດໜຶ່ງ ທີ່ໄດ້ໃຫ້ການຮັບຮອງເອົາແລ້ວ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດນ້ຳປະປາຢ່າງຖືກຕ້ອງຕາມກົດໝາຍ ວ່າດ້ວຍທຸລະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ລະບຽບການອື່ນ ໆ ທີ່ກ່ຽວຂ້ອງ. ສຳລັບການລົງທຶນຂອງຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ.

### ມາດຕາ 6: ການໃຫ້ການບໍລິການນ້ຳປະປາ

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງໃຫ້ການບໍລິການນ້ຳປະປາ ແກ່ລູກຄ້າຂອງຕົນທັງໝົດທີ່ຢູ່ໃນພື້ນທີ່ບໍລິການ ຊຶ່ງໄດ້ຮ້ອງຂໍນຳໃຊ້ບໍລິການມາຍັງຕົນ ບໍ່ວ່າຈະເປັນ ລູກຄ້າປະເພດຄົວເຮືອນ ຫຼື ປະເພດບໍ່ແມ່ນຄົວເຮືອນກໍຕາມ.

### ມາດຕາ 7: ການພັດທະນາ ແລະ ບົວລະບັດຮັກສາ ລະບົບນ້ຳປະປາ

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງພັດທະນາ ແລະ ບົວລະບັດຮັກສາລະບົບນ້ຳປະປາ ພາຍໃນພື້ນທີ່ບໍລິການຂອງຕົນ ຢ່າງສະໝ່ຳສະເໝີ ເພື່ອຮັບປະກັນປະສິດທິຜົນທາງດ້ານເສດຖະກິດ, ເຕັກນິກ ແລະ ການບໍລິການ.

### ມາດຕາ 8: ມາດຕະຖານຜົນການປະຕິບັດງານທາງດ້ານເຕັກນິກ

ອົງການນ້ຳປະປາ ຕ້ອງສ້າງລະບຽບການ ເພື່ອເປັນບ່ອນອີງ ສຳລັບການຕົກລົງກັບຜູ້ດຳເນີນທຸລະກິດນ້ຳປະປາແຕ່ລະລາຍ ກ່ຽວກັບ ເປົ້າໝາຍຜົນການປະຕິບັດງານ ແລະ ວິທີປະຕິບັດ ເພື່ອໃຫ້ບັນລຸໄດ້ ມາດຕະຖານຜົນການປະຕິບັດງານທາງດ້ານເຕັກນິກ ພາຍໃນກອບເວລາທີ່ໄດ້ກຳນົດໄວ້, ພ້ອມດຽວກັນ ກໍຕ້ອງຕິດຕາມເບິ່ງ ການປະຕິບັດຕາມເປົ້າໝາຍຜົນການປະຕິບັດງານ ທີ່ໄດ້ຕົກລົງເອົາໄວ້.

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງຍິນຍອມປະຕິບັດຕາມ ເປົ້າໝາຍຜົນການປະຕິບັດງານ ທາງດ້ານເຕັກນິກ ກ່ຽວກັບແຮງດັນນ້ຳ ແລະ ການຄ້ຳປະກັນການບໍລິການ ຕາມທີ່ໄດ້ຕົກລົງເອົາໄວ້ກັບອົງການນ້ຳປະປາ.

### ມາດຕາ 9: ການຮັກສາ ມາດຕະຖານຄຸນນະພາບນ້ຳ ແລະ ຂັ້ນຕອນ ການຕິດຕາມກວດກາ

ອົງການນ້ຳປະປາ ຕ້ອງສ້າງບົດແນະນຳ ກ່ຽວກັບການຍົກລະດັບຄຸນນະພາບນ້ຳ, ແລະຂັ້ນຕອນ ການເອົາຕົວຢ່າງ, ການທົດລອງ ແລະ ການວິເຄາະ ເພື່ອໃຫ້ຜູ້ດຳເນີນທຸລະກິດ ນ້ຳປະປານຳໃຊ້ ເພື່ອກ້າວໄປສູ່ການບັນລຸໄດ້ມາດຕະຖານຄຸນນະພາບນ້ຳດື່ມແຫ່ງຊາດ ພາຍໃນກອບເວລາ ທີ່ໄດ້ກຳນົດໄວ້.

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງຍິນຍອມປະຕິບັດຕາມເປົ້າໝາຍ ແລະ ຂັ້ນຕອນການຕິດຕາມກວດກາ ຄຸນນະພາບນ້ຳ ຕາມທີ່ໄດ້ຕົກລົງເອົາໄວ້ກັບ ອົງການນ້ຳປະປາ.

### ມາດຕາ 10: ການຕິດຕາມເບິ່ງລະດັບການບໍລິການ

ອົງການນ້ຳປະປາ ຕ້ອງສ້າງບົດແນະນຳ ກ່ຽວກັບ ການຕິດຕາມເບິ່ງ ລະດັບການບໍລິການຂອງຜູ້ດຳເນີນທຸລະກິດນ້ຳປະປາ ຊຶ່ງປະກອບດ້ວຍ ຄຸນະພາບນ້ຳ, ແຮງດັນນ້ຳ, ການຄ້ຳປະກັນການບໍລິການ ແລະ ຄວາມເພິ່ງພໍໃຈຂອງລູກຄ້າ.

ບົນພື້ນຖານບົດແນະນຳດັ່ງກ່າວ ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງຕິດຕາມເບິ່ງລະດັບການບໍລິການຂອງຕົນ ຢ່າງເປັນປົກກະຕິ ແລະ ຕ້ອງເກັບຮັກສາບົດບັນທຶກໄວ້ ໃຫ້ຖືກຕ້ອງ ແລະຄົບຖ້ວນ ຊຶ່ງຈະຕ້ອງໄດ້ອະນຸຍາດໃຫ້ສາທາລະນະຊົນ ເບິ່ງໄດ້ທຸກເວລາ.

### ມາດຕາ 11: ການປະເມີນຜົນການປະຕິບັດງານທາງດ້ານເຕັກນິກ

ອົງການນ້ຳປະປາ, ບຸກຄົນ ຫຼື ການຈັດຕັ້ງທີ່ຖືກແຕ່ງຕັ້ງຈາກອົງການນ້ຳປະປາ ຕ້ອງຮັບຜິດຊອບປະເມີນ ຜົນການປະຕິບັດງານທາງດ້ານເຕັກນິກ ລວມທັງຂັ້ນຕອນການຕິດຕາມເບິ່ງຜົນການປະຕິບັດງານ ດັ່ງກ່າວ.

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງລະໜອງຂໍ້ມູນຂ່າວສານທັງໝົດ ທີ່ຈຳເປັນສຳລັບການປະເມີນຜົນດັ່ງກ່າວ.

**ມາດຕາ 12: ການເກັບຮັກສາແຜນທີ່, ແຜນຜັງ ແລະ ບັນຊີລາຍການຊັບສິນບັດ**

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງເກັບຮັກສາແຜນທີ່, ແຜນຜັງ ແລະ ບັນຊີລາຍການຊັບສິນບັດອື່ນໆ ຂອງຕົນໄວ້ໃຫ້ຖືກຕ້ອງ ຄົບຖ້ວນ ແລະ ອະນຸຍາດໃຫ້ສາທາລະນະຊົນທົ່ວໄປເບິ່ງໄດ້, ຍົກເວັ້ນແຕ່ສິ່ງທີ່ອົງການນ້ຳປະປາເຫັນວ່າມີຄວາມຈຳເປັນຕ້ອງໄດ້ ເກັບຮັກສາໄວ້ເປັນຄວາມລັບ.

**ມາດຕາ 13: ການພົວພັນກັບລູກຄ້າ.**

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງສ້າງລະບຽບການ ກ່ຽວກັບການພົວພັນກັບລູກຄ້າ, ເຜີຍແຜ່ ໃຫ້ແກ່ສາທາລະນະຊົນຊາບເປັນແຕ່ລະໄລຍະ ແລະ ອະນຸຍາດໃຫ້ລູກຄ້າ ຜູ້ທີ່ມີຄວາມສົນໃຈ ເບິ່ງລະບຽບການດັ່ງກ່າວໄດ້. ພ້ອມກັນນັ້ນ ກໍຕ້ອງຈັດໃຫ້ມີປື້ມບັນທຶກຂໍ້ຂ້ອງໃຈ ແລະ ເກັບຮັກສາປື້ມດັ່ງກ່າວ ໄວ້ເປັນຢ່າງດີ.

ອົງການນ້ຳປະປາ, ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຖືກແຕ່ງຕັ້ງຈາກ ອົງການນ້ຳປະປາ ມີສິດກວດກາເບິ່ງ ປື້ມບັນທຶກຂໍ້ຂ້ອງໃຈນີ້ ໄດ້ທຸກເວລາ.

**ມາດຕາ 14: ການຕິດຕັ້ງ ອົງປະກອບ ຂອງ ລະບົບນ້ຳປະປາ ຢູ່ໃນທີ່ດິນ ສ່ວນບຸກຄົນ**

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງໄດ້ຮັບການອະນຸຍາດ ໃຫ້ຕິດຕັ້ງອົງປະກອບຕ່າງໆຂອງລະບົບນ້ຳປະປາ ຢູ່ໃນທີ່ດິນຕອນໃດໜຶ່ງ ຂອງສ່ວນບຸກຄົນ ໂດຍໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍທີ່ດິນຂອງ ສປປ ລາວ ແລະ ສາມາດໝາຍເຂດແດນທີ່ໄດ້ຮັບອະນຸຍາດ ໃຫ້ຕິດຕັ້ງລະບົບນ້ຳປະປານັ້ນໄວ້ ຊຶ່ງພາຍໃນເຂດແດນດັ່ງກ່າວ ເຈົ້າຂອງທີ່ດິນ, ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງບໍ່ມີສິດທຳການກໍ່ສ້າງໃສ່, ຖ້າບໍ່ໄດ້ຮັບການເຫັນດີເຫັນພ້ອມ ຈາກຜູ້ດຳເນີນທຸລະກິດນ້ຳປະປາທີ່ກ່ຽວຂ້ອງ. ສ່ວນກິດຈະກຳປູກຝັງແລະລ້ຽງສັດນັ້ນ ແມ່ນອະນຸຍາດໃຫ້ໄດ້ ແຕ່ຕ້ອງເອົາໃຈໃສ່ປົກປັກຮັກສາ ເພື່ອຮັບປະກັນບໍ່ໃຫ້ ກິດຈະກຳດັ່ງກ່າວ ສ້າງຄວາມເສຍຫາຍແກ່ລະບົບນ້ຳປະປາ.

**ມາດຕາ 15: ການທົດແທນຄ່າເສຍຫາຍ**

ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງທົດແທນຄ່າເສຍຫາຍ ໃຫ້ແກ່ເຈົ້າຂອງ ຫຼື ຜູ້ນຳໃຊ້ທີ່ດິນ ຊຶ່ງໄດ້ເສຍຜົນປະໂຫຍດທາງດ້ານເສດຖະກິດ-ການເງິນ ອັນເນື່ອງມາຈາກ ການໝາຍເຂດແດນ ກວມເອົາທີ່ດິນຕອນໃດໜຶ່ງຂອງເຂົາເຈົ້າ ເພື່ອຕິດຕັ້ງອົງປະກອບຂອງລະບົບນ້ຳປະປາໂດຍໃຫ້ສອດຄ່ອງກັບ ລະບຽບ ກົດໝາຍ ຂອງ ສປປ ລາວ.

## ມາດຕາ 16: ການອອກແຈ້ງການເຕືອນ

ໃນກໍລະນີທີ່ ຜູ້ດຳເນີນທຸລະກິດນ້ຳປະປາໃດໜຶ່ງ ປະຕິບັດບໍ່ໄດ້ຕາມລະບຽບການ ຫຼື ຂໍ້ຕົກລົງ ກ່ຽວກັບລະດັບການບໍລິການ ທີ່ຕົນໄດ້ຕົກລົງເອົາໄວ້, ອົງການນ້ຳປະປາ ມີສິດອອກແຈ້ງການເຕືອນ ຊຶ່ງຜູ້ດຳເນີນທຸລະກິດນ້ຳປະປາ ຈະຕ້ອງຍິນຍອມປະຕິບັດຕາມ, ເວັ້ນເສຍແຕ່ວ່າ ການປະຕິບັດບໍ່ໄດ້ຕາມລະບຽບການ ຫຼື ຂໍ້ຕົກລົງນັ້ນ ແມ່ນເນື່ອງມາຈາກ:

- ສະພາບດິນຟ້າອາກາດ ມີຄວາມຮ້າຍແຮງສຸດວິໄສ ພາໃຫ້ບໍ່ມີຄວາມອາດສາມາດ ຄ້ຳປະກັນໄດ້ພັນທະ ໃນການບໍລິການນ້ຳປະປາ.
- ການລົງທຶນໃນເບື້ອງຕົ້ນ ເຂົ້າໃສ່ໂຄງລ່າງອັນຕົ້ນຕໍບໍ່ພຽງພໍ.

## ມາດຕາ 17: ການຍິນຍອມ ປະຕິບັດຕາມ ແຈ້ງການເຕືອນ

ເມື່ອໄດ້ຮັບແຈ້ງການເຕືອນ, ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງດຳເນີນການທຸກສິ່ງຢ່າງ ທີ່ເຫັນວ່າເໝາະສົມ ເພື່ອຮັບປະກັນໃຫ້ໄດ້ຕາມ ລະດັບຂອງການບໍລິການ ທີ່ໄດ້ຕົກລົງເອົາໄວ້ ພາຍໃນໄລຍະເວລາທີ່ໄດ້ກຳນົດໃຫ້ ຢູ່ໃນໃບແຈ້ງການເຕືອນ.

ອົງການນ້ຳປະປາ ມີສິດສະເໜີໃຫ້ຜູ້ດຳເນີນທຸລະກິດນ້ຳປະປາທີ່ຝ່າຝືນຈ່າຍເງິນຊົດເຊີຍ ໃຫ້ແກ່ຜູ້ບໍລິໂພກ ທີ່ໄດ້ຮັບຄວາມເດືອດຮ້ອນ ຕາມຄວາມເໝາະສົມ.

# ໝວດທີ III. ການດັດສົມທາງດ້ານເສດຖະກິດ

## ມາດຕາ 18: ການສ້າງ ແລະ ປັບປຸງ ນະໂຍບາຍລາຄານ້ຳປະປາ

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ມີໜ້າທີ່ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍລາຄານ້ຳປະປາ ເປັນແຕ່ລະໄລຍະ ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ ທີ່ມີການປ່ຽນແປງ. ຈາກນັ້ນ, ນຳສະເໜີລັດຖະບານ ເພື່ອໃຫ້ການພິຈາລະນາຮັບຮອງເອົາ. ອົງການນ້ຳປະປາ ຕ້ອງພິມເຜີຍແຜ່ ນະໂຍບາຍລາຄານ້ຳປະປາ ທີ່ໄດ້ຖືກຮັບຮອງເອົາແລ້ວ.

## ມາດຕາ 19: ບົດແນະນຳ ກ່ຽວກັບ ການກຳນົດລາຄານ້ຳປະປາ

ບົນພື້ນຖານ ນະໂຍບາຍລາຄານ້ຳປະປາທີ່ໄດ້ຖືກຮັບຮອງເອົາແລ້ວ, ອົງການນ້ຳປະປາ ຕ້ອງສ້າງ ແລະ ນຳສະເໜີບົດແນະນຳ ກ່ຽວກັບການກຳນົດລາຄານ້ຳປະປາ ໃຫ້ແກ່ຄະນະກຳມະການດັດສົມ ເພື່ອໃຫ້ການພິຈາລະນາຮັບຮອງເອົາ, ແລະ ພິມເຜີຍແຜ່ບົດແນະນຳດັ່ງກ່າວ ໃຫ້ແກ່ລູກຄ້າ ແລະ ສາທາລະນະຊົນທົ່ວໄປ ໄດ້ຮັບຊາບ.

## ມາດຕາ 20: ອົງການທີ່ມີສິດຮັບຮອງເອົາລາຄານ້ຳປະປາ

ໂດຍອີງໃສ່ ນະໂຍບາຍລາຄານ້ຳປະປາທີ່ໄດ້ຖືກຮັບຮອງເອົາໃນແຕ່ລະໄລຍະ, ອົງການ

ນ້ຳປະປາ ຕ້ອງສ້າງບົດແນະນຳ ກ່ຽວກັບການກຳນົດລາຄານ້ຳປະປາ ເພື່ອໃຫ້ຄະນະກຳມະການ ດັດສົມທຸລະກິດນ້ຳປະປາຮັບຮອງເອົາ ແລ້ວພິມເຜີຍແຜ່ໃຫ້ ຜູ້ບໍລິໂພກ ແລະ ສາທາລະນະຊົນ ຮັບຊາບ.

**ມາດຕາ 21: ຂັ້ນຕອນໃນການກຳນົດລາຄານ້ຳປະປາ**

ຜູ້ດຳເນີນທຸລະກິດນ້ຳປະປາ ເປັນຜູ້ກຳນົດໂຄງສ້າງ ແລະ ລະດັບລາຄານ້ຳປະປາ ສຳລັບ ພື້ນທີ່ບໍລິການຂອງຕົນ ໂດຍໃຫ້ສອດຄ່ອງກັບ ບົດແນະນຳ ກ່ຽວກັບ ການກຳນົດ ລາຄານ້ຳປະປາ ແລະ ນຳສິ່ງໃຫ້ແກ່ ອົງການນ້ຳປະປາ ເພື່ອຊ່ວຍຄົ້ນຄວ້າປະກອບຄຳເຫັນ ແລະ ທາບທາມຄຳເຫັນ ຈາກ ພະແນກ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ພາກສ່ວນຕ່າງ ໆ ທີ່ກ່ຽວຂ້ອງ ຕາມຄວາມເໝາະສົມ. ຈາກນັ້ນ ຈຶ່ງນຳສະເໜີ ບົດກຳນົດລາຄານ້ຳປະປາຂອງຕົນ ພ້ອມດ້ວຍ ຄຳເຫັນຂອງ ອົງການນ້ຳປະປາ ແລະ ພາກສ່ວນຕ່າງ ໆ ຕໍ່ ອົງການທີ່ມີສິດຮັບຮອງເອົາ ລາຄາ ນ້ຳປະປາ ເພື່ອພິຈາລະນາ.

**ມາດຕາ 22: ການຮັບຮອງເອົາລາຄານ້ຳປະປາ**

ອົງການທີ່ມີສິດຮັບຮອງເອົາລາຄານ້ຳປະປາ ມີສິດຮັບຮອງເອົາລາຄານ້ຳປະປາ ຕາມທີ່ ສະເໜີມາ ຫຼື ໃຫ້ຄຳແນະນຳເພີ່ມເຕີມ ແກ່ຜູ້ດຳເນີນທຸລະກິດນ້ຳປະປາ ເພື່ອປັບປຸງບົດກຳນົດ ລາຄານ້ຳປະປາຄືນໃໝ່ ກ່ອນທີ່ຈະໃຫ້ການຮັບຮອງເອົາ ຢ່າງເປັນທາງການ.

ອົງການນ້ຳປະປາ ຕ້ອງພິມເຜີຍແຜ່ ໂຄງສ້າງ ແລະ ລະດັບລາຄານ້ຳປະປາ ທີ່ໄດ້ຖືກ ຮັບຮອງເອົາແລ້ວ.

**ມາດຕາ 23: ການທົບທວນ ລາຄານ້ຳປະປາ**

ອົງການນ້ຳປະປາ ຕ້ອງໄດ້ມີການທົບທວນ ລາຄານ້ຳປະປາ ເປັນແຕ່ລະໄລຍະ ໂດຍໃຫ້ ສອດຄ່ອງກັບ ນະໂຍບາຍລາຄານ້ຳປະປາ ແລະ ບົດແນະນຳ ກ່ຽວກັບການກຳນົດລາຄາ ນ້ຳ ປະປາ.

**ມາດຕາ 24: ການເກັບຄ່າບໍລິການນ້ຳປະປາ**

ຜູ້ດຳເນີນທຸລະກິດນ້ຳປະປາ ມີສິດເກັບເງິນຄ່າບໍລິການນ້ຳປະປາ ນຳລູກຄ້າຂອງຕົນ ຕາມອັດຕາລາຄານ້ຳປະປາ ທີ່ໄດ້ຖືກຮັບຮອງເອົາແລ້ວ ແລະ ມີສິດນຳໃຊ້ມາດຕະການບັງຄັບ ຕ່າງ ໆ ຕໍ່ລູກຄ້າຜູ້ທີ່ບໍ່ຊຳລະຄ່າບໍລິການ ຕາມກຳນົດເວລາ.

ອົງການນ້ຳປະປາ ຕ້ອງສ້າງ ແລະ ພິມເຜີຍແຜ່ບົດແນະນຳ ກ່ຽວກັບການຊຳລະ ຄ່າບໍ ລິການ ລວມທັງລະບຽບການ ກ່ຽວກັບການຕັດນ້ຳ.

**ມາດຕາ 25: ການຮຽກຮ້ອງຄ່າໃຊ້ຈ່າຍ ສໍາລັບ ການສ້ອມແປງ ຫຼື ການປ່ຽນແທນ**

ຜູ້ດໍາເນີນທຸລະກິດນໍ້າປະປາ ມີສິດຮຽກຮ້ອງຄ່າໃຊ້ຈ່າຍຕ່າງໆ ສໍາລັບການສ້ອມແປງ ຫຼື ປ່ຽນແທນອົງປະກອບຂອງລະບົບໂຄງລ່າງທີ່ ລູກຄ້າ ຫຼື ບຸກຄົນໃດໜຶ່ງ ທໍາໃຫ້ເປ່ເພ ຫຼື ເສຍຫາຍ. ໃນກໍລະນີທີ່ບໍ່ຊໍາລະ ຄ່າໃຊ້ຈ່າຍດັ່ງກ່າວ ຜູ້ດໍາເນີນທຸລະກິດນໍ້າປະປາ ມີສິດນໍາໃຊ້ມາດຕະການບັງຄັບ ຕາມລະບຽບກົດໝາຍ.

**ມາດຕາ 26: ການປະເມີນຜົນການປະຕິບັດງານທາງດ້ານການເງິນ**

ອົງການນໍ້າປະປາ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບມອບໝາຍຈາກອົງການນໍ້າປະປາ ຕ້ອງຮັບຜິດຊອບປະເມີນຜົນການປະຕິບັດງານ ທາງດ້ານການເງິນ ລວມທັງຂັ້ນຕອນໃນການຕິດຕາມກວດກາ ການປະຕິບັດງານດັ່ງກ່າວ.

ຜູ້ດໍາເນີນທຸລະກິດນໍ້າປະປາ ຕ້ອງສະໜອງຂໍ້ມູນຂ່າວສານທັງໝົດ ທີ່ຈໍາເປັນສໍາລັບການປະເມີນຜົນດັ່ງກ່າວ.

**ມາດຕາ 27: ການເກັບຮັກສາ ບັນຊີການເງິນ**

ຜູ້ດໍາເນີນທຸລະກິດນໍ້າປະປາ ຕ້ອງຖື ແລະ ເກັບຮັກສາບັນຊີການເງິນ ໂດຍໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການຂອງລັດ ແລະ ບົດແນະນໍາ ກ່ຽວກັບ ການບັນຊີດັດສົມ ຕາມທີ່ອົງການນໍ້າປະປາ ໄດ້ກໍານົດໃຫ້.

## ໝວດທີ IV. ອົງການຈັດຕັ້ງ ດັດສົມທຸລະກິດນໍ້າປະປາ

**ມາດຕາ 28: ຄະນະກໍາມະການດັດສົມ**

ຄະນະກໍາມະການດັດສົມ ປະກອບດ້ວຍ 7 ທ່ານ ຄື:

1) ລັດຖະມົນຕີຊ່ວຍວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ເປັນປະທານ
2) ຫົວໜ້າ ກົມເຄຫາ ຜັງເມືອງ, ເປັນຮອງປະທານ
3) ຫົວໜ້າຫ້ອງການປັບປຸງທຸລະກິດ, ສໍານັກງານນາຍົກລັດຖະມົນຕີ ເປັນຄະນະ
4) ຫົວໜ້າພະແນກນໍ້າປະປາ, ກົມເຄຫາ ຜັງເມືອງ ເປັນຄະນະ
5) ຜູ້ອໍານວຍການ ລັດວິສາຫະກິດນໍ້າປະປານະຄອນຫຼວງ, ໃນນາມຕາງໜ້າ ຜູ້ດໍາເນີນທຸລະກິດນໍ້າປະປາ ເປັນຄະນະ
6) ປະທານສະຫະພັນແມ່ຍິງ ກະຊວງ ຄຂປກ, ໃນນາມຕາງໜ້າຜູ້ບໍລິໂພກ ເປັນຄະນະ
7) ຫົວໜ້າອົງການນໍ້າປະປາ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ

ຄະນະກໍາມະການດັດສົມ ຕ້ອງປະຊຸມກັນ ໃນທຸກໆ 3 ເດືອນ ແລະ ຕາມຄວາມຈໍາເປັນ.

ການຕັດສິນຂອງຄະນະກຳມະການດັດສົມ ແມ່ນອີງໃສ່ສຽງສ່ວນຫຼາຍ ແລະ ໃນກໍລະນີທີ່ ມີສຽງສະເໝີກັນ ປະທານເປັນຜູ້ຕັດສິນ.

ລັດຖະມົນຕີວ່າການ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ແຕ່ງຕັ້ງຄະນະກຳມະການດັດສົມ. ໃນອະນາຄົດ, ຈຳນວນຄະນະກຳມະການດັດສົມ ຕ້ອງໄດ້ມີການປັບປຸງ ໃຫ້ສອດຄ່ອງ ກັບການຂະຫຍາຍຕົວ ຂອງການພັດທະນາຂະແໜງນ້ຳປະປາ.

**ມາດຕາ 29: ສິດ ແລະ ໜ້າທີ່ ຂອງຄະນະກຳມະການດັດສົມ**

ຄະນະກຳມະການດັດສົມ ມີສິດ ແລະ ໜ້າທີ່ດັ່ງນີ້ :

1) ກຳນົດນະໂຍບາຍ ແລະ ຊີ້ນຳລວມ ກ່ຽວກັບການດັດສົມທຸລະກິດນ້ຳປະປາໂດຍອີງໃສ່ນະໂຍບາຍ ນ້ຳປະປາແຫ່ງຊາດ.
2) ພິຈາລະນາ ແລະ ໃຫ້ການຮັບຮອງເອົາແຜນການດັດສົມ ທີ່ອົງການນ້ຳປະປາສ້າງຂຶ້ນ ລວມທັງແຜນດຳເນີນງານ, ການນຳໃຊ້ພະນັກງານ, ການຝຶກອົບຮົມ, ງົບປະມານ ແລະ ແຜນການເງິນ ກ່ອນນຳສະເໜີໃຫ້ທ່ານລັດຖະມົນຕີວ່າການກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເພື່ອພິຈາລະນາ ຮັບຮອງເອົາ.
3) ພິຈາລະນາຮັບຮອງເອົາບົດແນະນຳຕ່າງໆ, ລະບຽບການ, ມາດຕະຖານສົມທຽບ ແລະ ຕົວຊີ້ວັດ ກ່ຽວກັບ ຜົນການປະຕິບັດງານ ທີ່ພົວພັນເຖິງບັນດາກິດຈະກຳດັດສົມທຸລະກິດນ້ຳປະປາ ທີ່ອົງການນ້ຳປະປາສ້າງຂຶ້ນ.
4) ຊີ້ນຳ, ຕິດຕາມກວດກາ ແລະ ຄວບຄຸມ ການເຄື່ອນໄຫວວຽກງານດັດສົມທຸລະກິດນ້ຳປະປາ ຂອງ ອົງການນ້ຳປະປາ.

**ມາດຕາ 30: ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ອົງການນ້ຳປະປາ.**

ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ເປັນຜູ້ອອກຂໍ້ຕົກລົງ ກ່ຽວກັບ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ອົງການນ້ຳປະປາ ແລະ ປັບປຸງຂໍ້ຕົກລົງ ດັ່ງກ່າວເປັນແຕ່ລະໄລຍະ ໂດຍໃຫ້ສອດຄ່ອງກັບການຂະຫຍາຍຕົວ ຂອງການພັດທະນາຂະແໜງນ້ຳປະປາ.

**ມາດຕາ 31: ງົບປະມານສຳລັບ ການເຄື່ອນໄຫວວຽກງານດັດສົມທຸລະກິດນ້ຳປະປາ**

ງົບປະມານ ສຳລັບການເຄື່ອນໄຫວວຽກງານ ດັດສົມທຸລະກິດນ້ຳປະປາ ຂອງອົງການນ້ຳປະປາ ແມ່ນໄດ້ມາຈາກງົບປະມານແຫ່ງລັດ ແລະ ແຫຼ່ງທຶນອື່ນໆ ທັງຈາກພາຍໃນ ແລະ ຕ່າງປະເທດ. ນອກຈາກນີ້, ອົງການນ້ຳປະປາ ຍັງມີສິດໄດ້ຮັບທຶນຈຳນວນໜຶ່ງອີກ ຈາກເງິນທີ່ຄິດໄລ່ເພີ່ມເຂົ້າໃສ່ ລາຄານ້ຳປະປາ ແລະ ອື່ນ ໆ ຕາມການອະນຸມັດ ຂອງລັດຖະບານ.

## ໝວດທີ V. ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 32: ການແກ້ໄຂຂໍ້ຂັດແຍ່ງ

ກໍລະນີ ເກີດຂໍ້ຂັດແຍ່ງລະຫວ່າງຜູ້ດຳເນີນທຸລະກິດນ້ຳປະປາ ແລະ ລູກຄ້າ ແມ່ນໃຫ້ສອງຝ່າຍ ປຶກສາຫາລືແກ້ໄຂຮ່ວມກັນໂດຍສັນຕິວິທີ. ຖ້າຍັງບໍ່ສາມາດແກ້ໄຂກັນເອງໄດ້ ກໍໃຫ້ນຳສະເໜີຕໍ່ອົງການນ້ຳປະປາ ເປັນຜູ້ໄກ່ເກ່ຍ. ຫາກຍັງບໍ່ສາມາດໄກ່ເກ່ຍໄດ້, ກໍໃຫ້ດຳເນີນການຕາມຂະບວນການຍຸຕິທຳ.

## ໝວດທີ VI. ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 33: ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຍົກລະດັບການເຄື່ອນໄຫວທຸລະກິດນ້ຳປະປາ ໃຫ້ມີປະສິດທິຜົນສູງ ກໍຄືຜູ້ດຳເນີນທຸລະກິດນ້ຳປະປາ ທີ່ສາມາດບັນລຸໄດ້ຕາມເປົ້າໝາຍຜົນການປະຕິບັດງານ ທີ່ໄດ້ຕົກລົງເອົາໄວ້ຈະໄດ້ຮັບການຍ້ອງຍໍ ແລະການປະຕິບັດນະໂຍ ບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 34: ການລະເມີດ

ການກະທຳ ດັ່ງຕໍ່ໄປນີ້ ຖືວ່າ ເປັນການລະເມີດ:

1) ຜູ້ດຳເນີນທຸລະກິດນ້ຳປະປາ ບໍ່ຍິນຍອມປະຕິບັດຕາມ ໃບແຈ້ງການເຕືອນ ພາຍໃນກຳນົດເວລາ ທີ່ໄດ້ກຳນົດໄວ້;
2) ຜູ້ດຳເນີນທຸລະກິດນ້ຳປະປາ ປອມແປງ ບົດບັນທຶກ, ຂໍ້ມູນ ຫຼື ຂ່າວສານອື່ນ ໆ;
3) ຜູ້ດຳເນີນທຸລະກິດນ້ຳປະປາບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ຂອງພະນັກງານອົງການນ້ຳປະປາ;
4) ຜູ້ດຳເນີນທຸລະກິດນ້ຳປະປາ ເກັບຄ່າບໍລິການດ້ວຍລາຄາທີ່ສູງກ່ວາທີ່ໄດ້ຖືກຮັບຮອງເອົາແລ້ວ;
5) ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ສ້າງຄວາມເສຍຫາຍ ຫຼື ລັກລອບດັດແປງອົງປະກອບຂອງລະບົບນ້ຳປະປາ ໂດຍປາສະຈາກການເຫັນດີເຫັນພ້ອມ ຂອງຜູ້ດຳເນີນທຸລະກິດນ້ຳປະປາ;
6) ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ສ້າງຄວາມເສຍຫາຍ ຫຼື ລັກລອບດັດແປງ ໝໍ້ແທກນ້ຳ.
7) ການລະເມີດອື່ນ ໆ ທີ່ກະທົບຕໍ່ການດຳເນີນທຸລະກິດ ແລະ ສ້າງຄວາມເສຍຫາຍ ຕໍ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສ່ວນບຸກຄົນ.

### ມາດຕາ 35: ມາດຕະການ ຕໍ່ ຜູ້ລະເມີດ

ຜູ້ທີ່ມີການລະເມີດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 34 ຂອງດຳລັດສະບັບນີ້ ຈະຖືກ

ປະຕິບັດມາດຕະການຕົ້ນຕໍ ດັ່ງນີ້:

- ມາດຕະການສຶກສາອົບຮົມ, ໃນກໍລະນີທີ່ ການລະເມີດ ບໍ່ໄດ້ສ້າງຄວາມເສຍຫາຍຫຼວງຫຼາຍ.
- ມາດຕະການບໍລິຫານ, ໃນກໍລະນີທີ່ ຖືກປະຕິບັດມາດຕະການສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ມີການລະເມີດ. ຖ້າເກີດມີຄວາມເສຍຫາຍຮ້າຍແຮງ ອາດຈະຖືກສັ່ງງົດການບໍລິການ ຫຼື ໃຫ້ຢຸດເຊົາການດຳເນີນທຸລະກິດນ້ຳປະປາ;
- ມາດຕະການທາງອາຍາ, ໃນກໍລະນີ ການລະເມີດ ເປັນການກະທຳຜິດທາງອາຍາ.

ນອກຈາກຖືກປະຕິບັດມາດຕະການຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ຜູ້ລະເມີດທີ່ສ້າງຄວາມເສຍຫາຍ ຍັງຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ທີ່ຜູ້ກ່ຽວໄດ້ສ້າງຂຶ້ນ.

## ໝວດທີ VII. ບົດບັນຍັດສຸດທ້າຍ

### ມາດຕາ 36: ການຈັດຕັ້ງປະຕິບັດ

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

### ມາດຕາ 37: ຜົນສັກສິດນຳໃຊ້

ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ